# ກາບຫອຍມາງຫາງປາ

ເລື່ອງສັ້ນ ສຳລັບເຍົາວະຊົນ
ໂດຍ ນາງາສາກິ ເກັນໂນສຸເກະ
ແຕ້ມຮູບ ໂດຍ ຟູຢູຈິ ຢາມານາກະ
ຮຽບຮຽງ ເປັນພາສາລາວ ໂດຍ ດວງເດືອນ ບຸນຍາວົງ
ບັນນາທິການ ໂດຍ ຈັນທະສອນ ອິນທະວົງ



ຈັດພິມໂດຍ ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ ແຫ່ງຍີ່ປຸ່ນ
A.L.C

# ກາບຫອຍນາງຫາງປາ

ເລື່ອງສັ້ນ ສຳລັບ ເຍົາວະຊົນ


ໂດຍ ນາງາສາກິ ເກັນໂບສຸເກະ

ແຕ້ມຮູບ ໂດຍ ຟູຢູຈິ ຢາມານາກະ

ຮຽບຮຽງ ເປັນພາສາລາວ ໂດຍ ດວງເດືອນ ບຸນຍາວົງ

ບັນນາທິການ ໂດຍ ຈັນທະສອນ ອິນທະວົງ





ຈັດພິມໂດຍ

ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ ແຫ່ງຍີ່ປຸ່ນ

ວຽງຈັນ 2006

# ກາບຫອຍນາງຫາງປາ

ເລື່ອງສັ້ນ ສຳລັບ ເຍົາວະຊົນ ໂດຍ ນາງາສາກິ ເກັນໂນສຸເກະ

ແຕ້ມຮູບ ໂດຍ ຟູຢູຈິ ຢາມານາກະ

ຮຽບຮຽງ ເປັນພາສາລາວ ໂດຍ ດວງເດືອນ ບຸນຍາວົງ

ຈາກສະບັບພາສາໄທ ແປໂດຍ ຜຸດສະດີ ນາວາວິຈິດ

ສຳນັກພິມ ຜີເສື້ອ, ບາງກອກ ປະເທດໄທ, 5/4 ກະຫນົນ ສຸຂຸມວິດ 10110 ບາງກອກ ປະເທດໄທ.

ບັນນາທິການ ໂດຍ ຈັນທະສອນ ອິນທະວົງ

© ສະຫງວນລິຂະສິດ ບົດ 1974, ນາງາສາກິ ເກັນໂນສຸເກະ

© ສະຫງວນລິຂະສິດ ຮູບ 1974, ຟູຢູຈິ ຢາມານາກະ

ພິມຄັ້ງທຳອິດ ໃນຍີ່ປຸ່ນ ປີ 1974, ມີຊື່ວ່າ "ນິນງຽວ ງາ ຄູເຣຕະຊາຄູຣະໄງ"

ຈັດພິມໂດຍ ສຳນັກພິມ ຄາອິເຊອິ - ຊາ

ໄດ້ຮັບອະນຸຍາດ ແປເປັນພາສາລາວ ຈາກ ສຳນັກພິມ ຄາອິເຊອິ - ຊາ ໂດຍຜ່ານສູນກາງ

ຊັບສິນທາງປັນຍາ - ຕ່າງປະເທດ ແຫ່ງຍີ່ປຸ່ນ

ຈັດໜ້າ ສິນລະປະ ບໍລິສັດດອກເກດ ຈັດພິມ ແລະ ຈຳຫນ່າຍ

ຈັດພິມໂດຍ ສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ ແຫ່ງຍີ່ປຸ່ນ (A.L.C)

ທະບຽນອະນຸຍາດ: ລບ 20ພຈ23112005

ຈຳນວນພິມ 5000

ພິມທີ່ : ໂຮງພິມປານຄຳ ໄຮ-ເທັກ

ວຽງຈັນ 2006

NINGYOGA KURETA SAKURAGAI

Text copyright © 1974 by Gennosuke Nagasaki
Illustrations copyright © 1974 by Fuyuji Yamanaka

First published in Japan in 1974 under the title
"NINGYO GA KURETA SAKURAGAI" by KAISEI-SHA Publishing Co., Ltd.
Laotian translation rights arranged with KAISEI-SHA Publishing Co., Ltd.
through Japan Foreign-Rights Centre
5000 copies
Veintiane. 2006
The publisher gratefully acknowledges the support of the Japan Foundation in the publication of this book, and

**OKI** **Oki Volunteer fund**

# ຄຳນຳ

ການນຳເອົາວັນນະຄະດີສຳລັບເດັກ ທີ່ມີຊື່ສຽງຂອງໂລກ ມາສູ່ເດັກນ້ອຍລາວ ແມ່ນອຸດົມຄະຕິທີສອງ ຂອງສະມາຄົມຮ່ວມນ້ຳໃຈກັບເດັກນ້ອຍລາວ (ALC) ຮອງຈາກການຈັດພິມເລື່ອງທີ່ຂຽນ ແລະແຕ້ມໂດຍຄົນລາວເອງ. ພວກເຮົາ ເຫັນວ່າການອ່ານປຶ້ມ ຂອງນັກຂຽນຕ່າງປະເທດ ຊ່ອຍໃຫ້ພວກເຮົາ ນັກອ່ານ ນັກຂຽນ ແລະນັກແປ ມີບົດຮຽນ ຕື່ມຂຶ້ນເລື້ອຍໆ ໂດຍສະເພາະນະວະນິຍາຍ (ເລື່ອງຍາວ) ຄື່ເລື່ອງ " ກາບຫອຍນາງຫາງປາ" ນີ້ ຢູ່ບ້ານເຮົາແມ່ນປະເພດທີ່ຫາຍາກ.

ໃນດ້ານເນື້ອຫາສາລະ " ກາບຫອຍນາງຫາງປາ " ກໍເໝາະສົມສຳລັບເດັກ ໃນໄວປະຖົມຢູ່ແລ້ວ ເຫັນໄດ້ຈາກທີ່ຕົວລະຄອນເອກ ຊາຈິໂກະ ຫລື ຊັດຈັງ (ຊື່ເອີ້ນຫລິ້ນ), ເທັດສືຈິ ຫລື ເທັດຈັງ ແລະຕົວລະຄອນອື່ນໆ ກໍມີອາຍຸໄລ່ເລ່ຽກັນ. ຜູ້ຂຽນ ໄດ້ສອດແຊກ ຄະຕິທຳຂອງຊີວິດປະຈຳວັນ ຄວາມຜູກພັນໃນຄອບຄົວ ໝູ່ເພື່ອນ ບ້ານໃກ້ເຮືອນຄຽງ ເພາະເນື້ອເລື່ອງ ເກີດຂຶ້ນຢູ່ເມືອງນ້ອຍຊົນນະບົດ ໃນປະເທດຍີ່ປຸ່ນ. ເມື່ອວາດພາບໂດຍລວມ ຊີວິດຂອງປະຊາຊົນຂະເຈົ້າ ກໍຢາກຄືຢູ່ເມືອງລາວ ຕ່າງແຕ່ວ່າ ໃນນີ້ ເວົ້າເຖິງເມືອງຊາຍທະເລ. ຖ້າແມ່ນຢູ່ ສ.ປ.ປ.ລາວ ຄົງຈະເປັນເມືອງພູດອຍຫ່າງໄກພຸ້ນ ຈຶ່ງໃຊ້ໄດ້ ບໍ່ແມ່ນແຕ່ກັບຄົນຍີ່ປຸ່ນເທົ່ານັ້ນ ແຕ່ຢູ່ລາວ ກໍຕ້ອງການຄະຕິຊີວິດແບບດຽວກັນນີ້.

ALC ຂໍຂອບໃຈ ສຳນັກພິມ ຄາອິເອຊີ - ຊາ ໂດຍຜ່ານ ສູນກາງຊັບສິນທາງປັນຍາ - ຕ່າງປະເທດ ແຫ່ງຍີ່ປຸ່ນ ທີ່ໄດ້ຂໍລິຂະສິດການຈັດພິມເປັນ

ພາສາລາວໃນຄັ້ງນີ້. ພິເສດ ຂໍຂອບໃຈ ອາຈານ ດວງເດືອນ ບຸນຍາວົງ ທີ່ໄດ້ ອຸດສາຫະ ແປຈາກ ສະບັບພາສາໄທ ແລະ ອາຈານ ຈັນທະສອນ ອິນທະວົງ ຜູ້ກວດທຽບກັບສະບັບພາສາຍີ່ປຸ່ນ ອັນເຄົ້າຂອງນັກຂຽນ, ເປັນວຽກທີ່ຕ້ອງໃຊ້ ຄວາມພະຍາຍາມ ແລະ ເວລາພໍສົມຄວນ ສໍາລັບທັງສອງທ່ານ.

ບັດນີ້ ລູກຫລານ ຄູ ອາຈານ ແລະ ພໍ່ແມ່ ກໍມີປຶ້ມນິຍາຍມ່ວນ ຊວນ ຕິດຕາມຫົວນີ້ ໃນມືແລ້ວ ຂໍໃຫ້ມີຄວາມສຸກກັບການອ່ານເກີ້ນ.

ຄະນະບັນາທິການ ALC ວຽງຈັນ.

# ສາລະບັນ


| | | ໜ້າ |
|---|---|---|
| ບົດທີ 1 | ຈົດໝາຍຈາກແມ່ຕູ້ | 06 |
| ບົດທີ 2 | ບ້ານເກີດແມ່ | 13 |
| ບົດທີ 3 | ເທັດສືຈິ ກັບ ຊາຈິໂກະ | 23 |
| ບົດທີ 4 | ສາວນ້ອຍເມືອງຫລວງ | 33 |
| ບົດທີ 5 | ຂໍໂທດເດີ້ ຊັດຈັງ | 41 |
| ບົດທີ 6 | ເງິນ ຂອງນາງຫາງປາ | 49 |
| ບົດທີ 7 | ໄປຜະຈົນໄພ | 58 |
| ບົດທີ 8 | ໂຈນທະເລນ້ອຍ | 68 |
| ບົດທີ 9 | ສົມບັດລ້ຳຄ່າ | 75 |
| ບົດທີ 10 | ພາບຫອຍສາກົຣະ ຂອງນາງຫາງປາ | 84 |



# ບົດທີ 1 ຈົດໝາຍຈາກແມ່ຕູ້

ນາງນ້ອຍ ຊິງຄາວະ ຊາຈິໂກະ ເປັນນັກຮຽນຫ້ອງ ປ.4, ສູງ 1,33 ແມັດ; ໜັກ 32 ກິໂລ ຮອບເອິກ ແລະ ຮອບແອວເທົ່າໃດບໍ່ຮູ້ ແຕ່ມີຮູບຮ່າງຈ່ອຍສູງ ໄດ້ຫລາບໄດ້ລາຍດີ.

ກ້າຈະຖາມວ່າ "ຮຽນເກັ່ງບໍ່" ນາງຈະເຮັດຄໍຫົດເຂົ້າ ແລະ ແມບລີ້ນແບບອາຍໆ ແຕ່ບາດຍິ້ມ ແກ້ມບ່ອງເບື້ອງນຶ່ງ ເປັນໜ້າຮັກດີ.

ຊາຈິໂກະ ເຄີຍແຍງແວ່ນ ແລ້ວເຮັດໜ້າແບບຕ່າງໆ ເຊັ່ນຍິ້ມ ເຮັດໜ້າໄຄ່ ບາງເທື່ອກໍເຮັດໜ້າຊື່ໆ ຈ້ອງເບິ່ງໜ້າຕົນເອງໃນແວ່ນ ເພາະຢາກຮູ້ວ່າ "ບາດໃຫຍ່ແລ້ວຊິງາມ ຄືແມ່ບໍ່ນໍ ?"

ແມ່ຂອງຊາຈິໂກະ ເປັນຄົນງາມ ຮູບຮ່າງຮຽວສູງ ເບິ່ງຄືຜູ້ສາວຢູ່ ບໍ່ເປັນໜ້າເຊື່ອວ່າ ຊິມີລູກສາວໃຫຍ່ຮຽນ ຢູ່ ປ. 4 ແລ້ວ.

ຊາຈິໂກະ ບໍ່ສົງໄສເລີຍວ່າ ເປັນຫຍັງ ພໍ່ຈຶ່ງມາຮັກແມ່ ພໍ່ກັບແມ່ຂອງນາງ ຮັກກັນຢູ່ດົນ ແລ້ວຈຶ່ງຕັດສິນໃຈແຕ່ງດອງກັນ.

ແຕ່ໜ້າດູຕົນພໍ່ ທີ່ມາເສຽຊີວິດດ້ວຍອຸບັດເຫດຍົນຕົກ ຫວ່າງສອງປີກ່ອນ ຂະນະເດີນທາງກັບມາແຕ່ເຮັດວຽກຢູ່ດອນຣິກໄກໂດະ.

ເປັນໜ້າດູຕົນແມ່ ທີ່ຮ້ອງໄຫ້ອາໄລ ຈົນຕາແດງປານຕາກະຕ່າຍ ແລະ ນັ່ງເຈົ່າ ມິດຈຶ້ງເບິ່ງຮູບຖ່າຍຂອງພໍ່ ຜໍປານຄົນໄຮ້ວິນຍານ.

ໜ້າດູຕົນ ຊາຈິໂກະ. ນາງຮ້ອງໄຫ້ສະອຶກສະອື້ນຍ້ອນຢ້ານວ່າ ແມ່ຊິກາຍເປັນກະຕ່າຍປ່ວງບ້າ ແລ່ນຫລົບເຂົ້າປ່າຫາຍໂຕໄປອີກຄົນນຶ່ງ.

ຄືນກ່ອນຈະເກີດອຸບັດເຫດ ພໍ່ໂທລະສັບມາວ່າ: " ພໍ່ຊື້ຕຸ໊ກກະຕາໝີໄມ້ຄວັດ ມາໃຫ້ລູກແລ້ວເດີ ມື້ອື່ນ ພໍ່ຊິມາຫາລູກແລ້ວ ກ້າເອົາເດີ້ ", ເວົ້າສຸດ ພໍ່ກໍຫົວຢ່າງມີຄວາມສຸກ.

ແຕ່ ທັງພໍ່ ທັງຕຸ໊ກກະຕາໝີ ຈັກຫາຍໂຕໄປໃສໝົດ.

ພໍ່ເຄີຍເອົາໄມ້ໄຜ່ເຮັດໃບພັດ ເປັນເຄື່ອງຫລິ້ນໃຫ້ຊາຈິໂກະ, ເອົາຊາຈິໂກະຂີ່ຄໍ ເຄີຍຊ່ອຍແກ້ບົດເຝິກຫັດ ໂຈດເລກ ນັ່ງຫລິ້ນກີຕ້າຢູ່ຂ້າງປ່ອງຢ້ຽມ ພໍ່ດີດກີຕ້າເກັ່ງ ແມ່ກັບຊາຈິໂກະ ພາກັນຮ້ອງເພງ ເຮັດສຽງອຶງໄປນຳທຳນອງກີຕ້າຂອງພໍ່.

ວັນເວລາແຫ່ງຄວາມສຸກແບບນັ້ນ ບໍ່ຫວນກັບມາອີກແລ້ວ.

ແຕ່ມື້ນັ້ນມາ ຊາຈິໂກະ ຕ້ອງຢູ່ກັບຄວາມງຽບເຫງົາ ເພາະແມ່ອອກໄປເຮັດວຽກທາງນອກ ແມ່ເປັນນັກຂ່າວໃຫ້ວາລະສານແມ່ຍິງສະບັບນຶ່ງ ເຊິ່ງແມ່ເຄີຍເຮັດວຽກຢູ່ນຳກ່ອນແຕ່ງດອງ ແມ່ບອກລູກສາວຢ່າງດີໃຈວ່າ " ແມ່ໄດ້ເງິນເດືອນດີກວ່າທີ່ຄຶດໄວ້ຊ້ຳອີກ " ແຕ່ວຽກງານນີ້ເຮັດໃຫ້ແມ່ກັບຄືນມາເຮືອນເດິກດື່ນທຸກມື້.

ສຳລັບຊາຈິໂກະ ຊຶ່ງເປັນເດັກນ້ອຍອ່າວຕິດແມ່ ແລະມັກເອົາແຕ່ໃຈໂຕເອງແດ່ ເມື່ອເລີກມາແຕ່ໂຮງຮຽນ ເຂົ້າເຮືອນທີ່ບໍ່ເຫັນແມ່ມາກ້າຢູ່ ແລ້ວເວົ້າວ່າ " ກັບມາແລ້ວບໍ ? " ນາງກໍພໍຢາກໄຫ້. ບໍ່ມີໃຜຮັບຟັງນາງເລົ່າ

ເລື່ອງຕ່າງໆ ທີ່ເກີດຂຶ້ນຢູ່ໂຮງຮຽນ ເຊິ່ງນາງຢາກເວົ້າສູ່ຟັງທັນທີເມື່ອມາຮອດເຮືອນ. ຊາຈິໂກະ ຄຽດໃຫ້ແມ່ ຈົນຕ້ອງລະເບີດອາລົມອອກ ດ້ວຍການປ້າຍນ້ຳຕາອອກມາຂຽນໃສ່ແກ້ວປ່ອງຢ້ຽມຫລາຍເທື່ອວ່າ : " ແມ່ຜີບ້າ, ຜີບ້າ, ຜີບ້າ ".

ດັ່ງນັ້ນ ເວລາແມ່ຢູ່ເຮືອນ ຊາຈິໂກະ ຈຶ່ງບໍ່ໄກຈາກຂ້າງແມ່ເລີຍ ບາງເທື່ອນາງກໍຂຶ້ນໄປນອນເທິງຕຽງຂອງແມ່ ໜີ້ນອໍເຊາະຟຸບໃສ່ເອິກແມ່ ແລ້ວຫລັບໄປເລີຍ.

ບາງເທື່ອ ແມ່ກໍກອດຊາຈິໂກະ ໄວ້ແໜ້ນໆແລ້ວຮ້ອງເພງທີ່ແມ່ເຄີຍຮ້ອງກັບພໍ່ ແທນທີ່ຈະຮ້ອງເພງກ່ອມລູກ ຊຶ່ງເຮັດໃຫ້ຊາຈິໂກະ ມີຄວາມຮູ້ສຶກສະບາຍໃຈ.

ຕອນເຊົ້າ ກ່ອນໄປໂຮງຮຽນ ຊາຈິໂກະ ມັກໃຫ້ແມ່ຫວີຜົມໃຫ້ ເປັນເວລາທີ່ນາງມີຄວາມສຸກຫລາຍ ຜົມຂອງນາງຍາວກາຍບ່າໄຫລ່ ແດ່ແລ້ວ.

" ຜົມດຳເຫລື້ອມງາມແທ້ໆ ຄືຊິຄືຜົມພໍ່ເນາະ " ແມ່ເວົ້າທັງຫວີຜົມໃຫ້ຄ່ອຍໆ. ຊາຈິໂກະ ມີຄວາມສຸກຫລາຍ ເມື່ອນາງໄດ້ເຫັນເງົາຕົນເອງຄຽງຄູ່ກັບແມ່ໃນແວ່ນແຍງແກ້ວໃສສະອາດ.

ປີນີ້ ກໍໃກ້ຈະຮອດມື້ພັກໂຮງຮຽນປະຈຳລະດູຮ້ອນແລ້ວ.

ແຕ່ຄາວ ຊາຈິໂກະ ຮຽນຢູ່ ຫ້ອງ ປ.1 ແລະ ປ.2 ນັ້ນ ລະດູຮ້ອນແມ່ນລະຍະເວລາແຫ່ງຄວາມມ່ວນຊື່ນເບີກບານ ເພາະຕອນນັ້ນ ພໍ່ຍັງມີຊີວິດຢູ່ ແລະແມ່ກໍຢູ່ເຮືອນ.

ຊາຈິໂກະ ມັກໄດ້ໄປຫລິ້ນນ້ຳທະເລກັບພໍ່ແລະແມ່ ບາງເທື່ອກໍຂຶ້ນພູໄລ່ຈັບແມງກະເບື້ອກັນ. ເປັນຍາມພັກລະດູຮ້ອນ ທີ່ມ່ວນຫລາຍ.

ແຕ່ລະດູຮ້ອນປີກາຍນີ້ ບໍ່ມີພໍ່ຢູ່ນຳແລ້ວ ແມ່ກໍຕ້ອງອອກໄປເຮັດວຽກນອກ. ຊາຈິໂກະ ຈຶ່ງຕ້ອງເຮັດບົດເຝິກຫັດ ວຽກໂຮງຮຽນທັງໝົດດ້ວຍຕົນເອງ ຫລື ໄປລອຍນ້ຳຢູ່ສະລອຍນ້ຳພຽງຜູ້ດຽວ.

ລອຍນ້ຳແລ້ວ ກັບມາຮອດເຮືອນ ກໍພໍດີຫິວ ແຕ່ແມ່ບໍ່ຢູ່ ນາງໄດ້ກິນນົມສົດກັບເຂົ້າໜົມ ແລ້ວຍັງຕົນເອງຢູ່ໃນຫ້ອງສີ່ລ່ຽມ ທີ່ຮ້ອນເອົ້ານັ້ນນາງຮູ້ສຶກອ້າງວ້າງ. ກິນອີ່ມແລ້ວກໍຮູ້ສຶກເຫງົານອນ ແຕ່ຂີ້ຄ້ານຍ່າງໄປຫາຕຽງ ຈຶ່ງລົ້ມໂຕລົງນອນກັບພື້ນປູສາດຕາຕາມິ ແລ້ວຫລັບໄປເລີຍ, ເປັນແບບນີ້ຫລາຍເທື່ອຫລາຍທີ.

ເມື່ອຊາຈິໂກະ ຄຶດເຫັນວ່າຈະຕ້ອງພົບກັບຍາມພັກລະດູຮ້ອນ ຄືປີກາຍແລ້ວ ນາງຈຶ່ງຮູ້ສຶກບໍ່ດີໃຈຄືຄົນອື່ນ. ນາງນ້ອຍ ມິໂດຣິ ໝູ່ຜູ້ໃກ້ຊິດຄົນນຶ່ງຂອງຊາຈິໂກະ ບອກວ່າຈະໄປທ່ຽວຫລິ້ນຢູ່ຊິນຊູ ສ່ວນທ້າວນ້ອຍ ມາຊາໂອະ ຈະໄປຣິກໄກໂດ.

ຊາຈິໂກະ ເລີຍຈະໄດ້ຢູ່ຜູ້ດຽວ ຕະຫລອດຍາມພັກຮ້ອນປີນີ້.

" ໂອຍ ! ບໍ່ມ່ວນເລີຍ ບໍ່ຢາກໃຫ້ໂຮງຮຽນພັກເດ ! "

ແຕ່ແລ້ວ ກໍມີຈົດໝາຍສະບັບນຶ່ງມາຫາ ເຮັດໃຫ້ຊາຈິໂກະ ເຊົາຫງ່ວມເຫງົາ.

" ສະບາຍດີບໍ່ ຫລານຊັດຈັງ

ໂຮງຮຽນໃກ້ຈະພັກຍາມຮ້ອນແລ້ວບໍ່ ຫລານມາທ່ຽວ ດອນກິວຊິວດີບໍ່ ໜ້າບ້ານແມ່ຕູ້ເປັນທະເລ, ທະເລຢູ່ພີ້ ງາມຫລາຍໃດ໋ ນ້ຳໃສຈົນແນມເຫັນໂຕປາລອຍຢູ່ພຸ້ນນ່າ. ຊວນແມ່ມາທ່ຽວບ້ານແມ່ຕູ້ເດີ ແມ່ຕູ້ຈະຄອຍເດີ.

ເມື່ອອ່ານຈົດໝາຍນີ້ແລ້ວ ຊາຈິໂກະ ດີໃຈເຕັ້ນເຕາະເຕັ້ນດ່ອງ ນາງຄຶດເຫັນພາບທະເລສີຄາມ ໃສປານແກ້ວມໍລະກົດ ແລະໄດ້ຍິນສຽງຟອງທະເລຕີຝັ່ງ ດັງ ຊ໊າດ ຊ໊າດ... ນາງດີໃຈຈົນປາກບໍ່ອອກບອກບໍ່ຖືກ. ຊາຈິໂກະ ລອຍນ້ຳເກັ່ງ ເພາະນາງເປັນສະມາຊິກໂຮງຮຽນສອນລອຍນ້ຳ ແລະລອຍຢູ່ສະລອຍນ້ຳໃນຮົ່ມເປັນປະຈຳ. ແມ່ນແຕ່ໃນຍາມໜາວ ທີ່ເຢັນຈ້ອຍໆນາງກໍຫຼວໄປ.

- " ແມ່ຢາກໃຫ້ລູກດຸໝັ່ນຮຽນໜັງສື ຄືຮຽນລອຍນ້ຳເດີ້ນໍ ", ແມ່ເຄີຍເວົ້າເຍີ້ຍ ຊາຈິໂກະ ບໍ່ມັກຮຽນໜັງສືປານໃດ ແຕ່ກ້າມີເສັງລອຍນ້ຳຢູ່ໂຮງຮຽນແລ້ວ ນາງເຊື່ອວ່າຕົນເອງຕ້ອງໄດ້ທີນຶ່ງໂລດ.

ແມ່ຕູ້ທີ່ຢູ່ ກິວຊິວ ເຄີຍມາສິ່ງສະການພໍ່ ແລ້ວກໍບໍ່ໄດ້ເຫັນກັນອີກ. ເພິ່ນເປັນຄົນຈ່ອຍບາງ ຮ່າງນ້ອຍໆ ແຕ່ທັນມັງມໍ ແຂງແຮງດີ.

ໃນມື້ນັ້ນ ຊາຈິໂກະ ຢາກໃຫ້ແມ່ມາຮອດເຮືອນໄວທີ່ສຸດ ເພື່ອຊິໄດ້ບອກເລື່ອງຈົດໝາຍແມ່ຕູ້ ດັ່ງນັ້ນ ພໍແຕ່ແມ່ກ້າວເຂົ້າປະຕູເຮືອນມາ ບໍ່ທັນໄດ້ກອດຮອດເກີບ ຊາຈິໂກະ ກໍເວົ້າຂຶ້ນວ່າ :

- " ແມ່ເອີ້ຍ, ແມ່ເອີຍ ພັກຮ້ອນປີນີ້ ພາລູກໄປຢາມແມ່ຕູ້ ຢູ່ກິວຊິວ ແດ່ເດີ, ແມ່ຕູ້ ຂຽນຈົດໝາຍມາບອກໃຫ້ໄປຢາມແທ້ໆ ", ນາງເວົ້າ ທັງເດ່ຈົດໝາຍໄປຕໍ່ໜ້າແມ່.

- " ແມ່ກໍຢາກພາໄປຢູ່ ລູກເອີຍ ແຕ່ບໍ່ຮູ້ວ່າ ຊິຂໍພັກວຽກໄດ້ບໍ່ ? "

ຄຳຕອບຂອງແມ່ ເຮັດໃຫ້ຄວາມຕື່ນເຕັ້ນດີໃຈຂອງຊາຈິໂກະ ເຫີຍຫາຍໄປໃນອາກາດທັນທີ.

- " ໄປເທາະເນາະແມ່ ໝູ່ລູກທັງ ມິໂດຣິ ທັງມາຊາໂອະ ກະຊິໄປທ່ຽວພຸ້ນທ່ຽວພີ້ກັນໝົດ ນົບລະ ແມ່ພາລູກໄປແດ່ ", ຊາຈິໂກະ ຍົກມືຂຶ້ນນົບແມ່ເປັນການອໍອ້ອນວອນກົງໆ.



- " ເອີ ແມ່ນໃດເນາະ ", ແມ່ຫງ່ຽງຄໍໜ້ອຍນຶ່ງແລ້ວເວົ້າຕໍ່ວ່າ
- " ຊັ້ນ ແມ່ຊິເບິ່ງ ກ່ອນເດີ ຈະພະຍາຍາມໃຫ້ລູກສົມຫວັງດອກ ".
- " ໂອຍ ດີໃຈແຮງເດ້ ", ຊາຈິໂກະລຸກແລ່ນເຕັ້ນໄປມາ ແລ້ວຕົບມືປີ້ວະໆ ສອງບາດຊ້ອນ ຄືເວລາໄປໄຫວ້ຜີທໍາບູຊາ ອັນເປັນການສະແດງຄວາມເຄົາລົບສູງສຸດ ທັງເວົ້າວ່າ :
- " ຂອບໃຈຫລາຍໆ ແມ່ເອີຍ ! ແມ່ແມ່ນເທບທິດາຜູ້ຍິ່ງໃຫຍ່ຂອງລູກ".
- " ໂອ້ຍ ລູກສາວຜູ້ນີ້ !"

ແມ່ກັບລູກ ແນມເບິ່ງໜ້າກັນ ແລ້ວຫົວອຶ໊ກໆຂຶ້ນ.

- " ໂຮງຮຽນພັກແລ້ວ ເຮົາໄປກັບໂລດເນາະແມ່ "
- " ເອີ ! ເອີ ! "

ຊາຈິໂກະ ຈຶ່ງເບີກບານຂຶ້ນແດ່ ນາງໄປເວົ້າອ້າງພວກໝູ່ວ່າ ພັກຮ້ອນປີນີ້ ຕົນຈະໄປທ່ຽວກິວຊິວ.

ຊາຈິໂກະ ວາງແຜນໄວ້ວ່າ ໄປຮອດກິວຊິວແລ້ວຊິລອຍນໍ້າຫລາຍໆ ແລະຕາກແດດ ຈົນໂຕກໍ່າດໍາແຫລ້ ແລະເກັບກາບປີ້ຫອຍງາມໆແປກໆມາ

ໄວ້ເຮັດຕົວຢ່າງ ແລະ ຂຽນລາຍງານສິ່ງເອື້ອຍຄູ ເປັນວຽກບ້ານໃນຍາມພັກລະດູຮ້ອນ. ຈະຫາໝູ່ໃຫ້ໄດ້ຫລາຍໆຄົນ ແລະຫລິ້ນໃຫ້ລັກໆ. ຄວາມຝັນຂອງນາງໃຫຍ່ຂຶ້ນ ໃຫຍ່ຂຶ້ນ.

ແຕ່ເມື່ອ ຊາຈິໂກະ ທວງແມ່ຄືນ ເລື່ອງໄປທ່ຽວກິວຊິວ ແມ່ເຮັດໜ້າຊົງອຸກໃຈ ແລະບອກວ່າ:

- " ວຽກຢູ່ບໍລິສັດພວມຫຍຸ້ງໆ ນ່າລູກ ມີພະນັກງານສອງຄົນບໍ່ສະບາຍແມ່ຄືຊິຂໍພັກຫລາຍມື້ບໍ່ໄດ້ແລ້ວລະ ! "

" ໂອ້ຍ ຕາຍແລ້ວ ! " ຊາຈິໂກະ ຕັ້ງໃຈຄອງຄອຍຢ່າງໃຈຈົດຈໍ່ແທ້ໆຂຶ້ນແຜນການຕ່າງໆນາໆ ທັງໄປເວົ້າອ້າງໝູ່ໄວ້ພໍແຮງແລ້ວ !

- " ແມ່ຂີ້ຕົວະ ! ແມ່ໃຈດຳ ! " ຊາຈິໂກະ ທັງໄຫ້ ແລະຟາດກຳປັ້ນນ້ອຍໆໃສ່ແມ່.

- " ແມ່ ຂໍໂທດລູກແທ້ໆ ຊັດຈັງ".

- " ບໍ່ໄດ້ວ່າ ບໍ່ຍົກໂທດໃຫ້ ", ຊາຈິໂກະ ແກວ່ງຫົວ ແລະໂດດເຂົ້າໃສ່ແມ່ ທັງຮ້ອງໄຫ້.

- " ແມ່ໃຈດຳ ຂີ້ຕົວະ ! ແມ່ຜີບ້າ ! "

ລະຍະນີ້ ແມ່ມີແຕ່ເວົ້າວ່າ : " ໄປບໍ່ໄດ້ ເພາະວຽກຫຍຸ້ງຫລາຍ " ແມ່ບໍ່ໄດ້ໄປໂຮງຮຽນລູກເລີຍ ບໍ່ວ່າຈະແມ່ນມື້ ຊ່ວງເສັງກິລາ ມື້ທີ່ທາງໂຮງຮຽນເຊີນພໍ່ແມ່ ຜູ້ປົກຄອງ ໄປສັງເກດການຮຽນ ການສອນ ຫລື ແມ່ນແຕ່ມື້ວາງສະແດງຮູບແຕ້ມເຊິ່ງຊາຈິໂກະ ໄດ້ຮັບຣາງວັນທີນຶ່ງ.

ບໍ່ວ່າຈະມີຫຍັງ ແມ່ກໍອ້າງແຕ່ວຽກກັບວຽກ ແມ່ເຫັນວຽກສຳຄັນກວ່າ.

- " ລະຫວ່າງລູກກັບວຽກ ອັນໃດສຳຄັນກວ່າກັນ ? ", ຊາຈິໂກະ ເຄີຍ

ກາມແມ່ດັ່ງນີ້. ແມ່ໄດ້ແຕ່ແນມເບິ່ງໜ້າ ຊາຈິໂກະ. ຊາຈິໂກະຮ້ອງໄຫ້ຢູ່ຄາວ ນຶ່ງ ແລ້ວເງີຍໜ້າຂຶ້ນບອກຢ່າງເດັດດ່ຽວວ່າ:

- " ລູກໄປເອງຜູ້ດຽວກະໄດ້ ! "
- " ໄປຜູ້ດຽວ ຊັ້ນຫວະ ?" ແມ່ເຮັດຕາຕີ່
- " ກິວຊິວ ຢູ່ໄກໃດລູກ "
- " ໄກບໍ່ໄກ ບໍ່ຈັກ ຊາຈິໂກະ ໄປເອງໄດ້ "
- " ຊິໄປໄດ້ ຈັ່ງໃດ ? "
- " ໄປໄດ້ ລູກໄປໄດ້ ກ້າແມ່ບໍ່ໃຫ້ໄປ ລູກຊິລັກໜີ !", ຊາຈິໂກະ ຈື້ງເບິ່ງ ໜ້າແມ່ ນ້ຳຕາໄຫລອາບໜ້າ.
- " ລູກເວົ້າຂູ່ແມ່ ຊັ້ນຫວະຫນີ້ ?"
- " ກະແມ່ຢາກຕົວະລູກຫັ້ນເດ້ !"
- " ຈັ່ງແມ່ນເວົ້າຍາກເນາະ ", ແມ່ຫັນໃຈແຮງ.

ແມ່ຄຶດຢູ່ສາມມື້ສາມຄືນ ໂທລະສັບໄປເປີກສາກັບແມ່ຕູ້ສອງເທື່ອ ໃນທີ່ ສຸດກໍ່ຕົກລົງໃຫ້ ຊາຈິໂກະ ເດີນທາງໄປຢາມແມ່ຕູ້ຢູ່ກິວຊິວຕາມລຳພັງ.



## ບົດທີ 2 ບ້ານເກີດແມ່

ທ້າວນ້ອຍເທັດສືຈິ ເຫັນຊາຈິໂກະ ເປັນເທື່ອທຳອິດ ຢູ່ຕໍ່ໜ້າສະຖາ ນີລົດໄຟ ມື້ນັ້ນ ເຂົາຫາກໍ່ກັບມາແຕ່ໄປສົ່ງປາໃຫ້ເຮືອນປ້າ ຕັ້ງແຕ່ເຊົ້າໆ.



- " ຂໍໂທດ ກະລຸນາແດ່ ! "

ເຫັດສີຈິ ໄດ້ຍິນສຽງເອີ້ນຢູ່ທາງຫລັງ ຈຶ່ງງວາກໄປເບິ່ງ ກໍເຫັນສາວນ້ອຍ ໜ້າຕາໜ້າຮັກຄົນນຶ່ງຢືນຢູ່. ອາຍຸຄົງຈະໜ້ອຍກວ່າເຂົາຈັກນຶ່ງ ຫລືສອງປີ ນາງນຸ່ງເສື້ອກະໂປງສີບົວ ແພບາງປານປີກຈັກຈັ່ນ ລຳຂາຮຽວນ້ອຍຂອງນາງພົ້ນເດັ່ນອອກຈາກເຊີງສິ້ນກະໂປງທີ່ອ່າວເຂີນ.

- " ລົດເມສາຍໄປ ຍຸເມງະອຸຣະ ຄັນໃດ ?", ຊາຈິໂກະ ກາມທັງຍິ້ມໃຫ້ເຫັດສີຈິ ໜ່ວຍຕາຂອງນາງມົນໃຫຍ່.

ເຫັດສີຈິ ແນມເບິ່ງໃບໜ້າຜ່ອງໃສທີ່ຢູ່ຕໍ່ໜ້າເຂົາ ແລ້ວເວົ້າອຶງອະໆວ່າ:

- " ເອີ້ ... ເອີ້ ..." ເຫັດສີຈິ ໃນໂທໃຫ້ໂຕເອງ ທີ່ປາກພ່າ ບໍ່ຄືເດັກນ້ອຍອື່ນໆ ເຂົາປາກບໍ່ລ່ຽນ ຊຶ່ງເຮັດໃຫ້ເຂົາເສຽປຽບມາຫລາຍ ເຂົາຢາກເວົ້າຫຍັງກໍເວົ້າບໍ່ອອກຄືໃຈຄຶດ ເຮັດໃຫ້ໝຸດໝັດ ຂັດໃຈແຮງ.

ເວລາຢູ່ໂຮງຮຽນ ເຫັດສີຈິ ຈຶ່ງອ່ານປຶ້ມຮຽນບໍ່ລ່ຽນ ເວລາຄູກາມກໍຕອບໄດ້ຊ້າ ຍິ່ງຕັ້ງໃຈເວົ້າ ກໍຍິ່ງເວົ້າບໍ່ອອກ ພວກໝູ່ເພື່ອນຈຶ່ງຫົວຂວັນ ເຮັດ

ໃຫ້ເຂົາບໍ່ຢາກເວົ້າ ບໍ່ຢາກລົມກັບໃຜ ແລ້ວກໍເລີຍບໍ່ຢາກຫລິ້ນກັບໃຜຈັກຄົນ.

ດຽວນີ້ກໍຄືກັນ, ເມື່ອເຫັນໜ້າ ຊາຈິໂກະ ເຂົາຮູ້ສຶກຕື່ນເຕັ້ນຫລາຍ ຕື່ນເຕັ້ນຈົນປາກບໍ່ອອກ ທັງໆທີ່ຢາກບອກທາງໃຫ້ນາງຜູ້ເປັນຕາຮັກ ເຂົາອາຍຈົນໜ້າແດງ ແຕ່ຄົງເບິ່ງບໍ່ເຫັນ ເພາະເທັດສຶຈິ ຜິວກ່ຳຍ້ອນຕາກແດດຫລາຍ.

ເທັດສຶຈິ ຈຶ່ງປ່ຽນຈາກການພະຍາຍາມເວົ້າມາເປັນການໃຊ້ທ່າທາງ ໂດຍກວັກມືໃຫ້ ນາງນ້ອຍຍ່າງນຳໄປ.

ຊາຈິໂກະ ຫິ້ວຫີບເຄື່ອງນຸ່ງຍ່າງນຳຫລັງ ເທັດສຶຈິ ໄປທັງຄຶດວ່າ:

" ທ້າວ ອັນນີ້ ຄືຊິປາກກືກ ".

ເທັດສຶຈິ ຍ່າງຜ່ານຝູງຄົນໄປໜ້າລິບໆ ໂດຍບໍ່ຫລຽວຫລັງກັບມາເບິ່ງ ຊາຈິໂກະ ອີກທາງ ຊາຈິໂກະ ກໍແນມນຳບໍ່ໃຫ້ຄາດສາຍຕາ ແຕ່ນາງຍ່າງໄວບໍ່ໄດ້ ເພາະຫີບໜັກ.

ເທັດສຶຈິ ຍ່າງໄປຈົນຮອດປະຕູລົດເມຄັນນຶ່ງ ແລ້ວຈຶ່ງງວາກຄືນມາເບິ່ງຂ້າງຫລັງ ເຂົາຄຶດວ່າ ນາງນ້ອຍຍ່າງນຳມາຕິດໆ ແຕ່ເຫັນວ່ານາງຍັງຢູ່ໄກຕັ້ງສິບແມັດ ທັງໃຊ້ມືທັງສອງຫິ້ວຫີບທີ່ຊົງໜັກນັ້ນຈົນໂຕກົ່ງ ໃບໜ້າແດງຮື່ນ ຄົງອອກແຮງຫລາຍສົມຄວນ.

ເທັດສຶຈິ ອົດຫົວບໍ່ໄດ້ ເມື່ອເຫັນທ່າທາງຄະໂຍ່ງຄະເຍ່ງຂອງນາງ ຈຶ່ງຍ່າງກັບໄປຮັບຫີບຈາກມືຊາຈິໂກະ ມາຫິ້ວເອງ :

- " ຂອບໃຈເດີ ", ຊາຈິໂກະ ເວົ້າ.

ແຕ່ເທັດສຶຈິ ຟ້າວຍ່າງອອກໜ້າໄປກ່ອນຢ່າງອາຍໆ ແລ້ວກ້າວຂຶ້ນຂັ້ນໄດລົດເມປະຈຳທາງ ຊາຈິໂກະ ຍ່າງນຳຕິດໆ ຂຶ້ນລົດເມໄປນຳ.

- " ອ້າວ ! ເທັດສຶຈິ ໄປໃສມາລະຫັ້ນ ? " ມີສຽງທ້ວງມາຈາກລຸງຫົວລ້ານ ດັ່ງໂປ໌ງ ມີຫນວດເຄົາຍາວຜູ້ນຶ່ງ.

" ຄືແມວນ້ຳອ້ອຍຕ້ອຍເນາະ ", ຊາຈິໂກະ ຄຶດເວົ້າໃນໃຈຢູ່ຜູ້ດຽວ.

- " ມາຕ້ອນພີ່ນ້ອງ ຊັ້ນຫວະ ? " ເທັດສຶຈິ ແກວ່ງຫົວແລ້ວພະຍາຍາມ ຕອບສຸດຄວາມສາມາດ.

- " ຜະ ຜູ່ ນະ ນີ້ ຫາ ຫາ ກໍ ເຫັນ ຫວະ ຫວ່າງ ໆ ກາ ກີ້ ".
(ໂອະ ທ້າວອັນນີ້ ບໍ່ໄດ້ປາກກືກ ແຕ່ປາກພໍ່າຊື່ໆ). ຊາຈິໂກະ ບອກຕົນເອງ ແລ້ວນາງກໍຕອບລຸງ " ແມວນ້ຳ " ເອງວ່າ :

- " ຫລານກາມວ່າ ລົດເມສາຍຈະໄປ ຍຸເມງະອຸຣະ ຈອດຢູ່ໃສ ເລົາກໍເລີຍພາມາ"

- " ເອີ້ ບັກອີ້ດີ້ນີ້ ຮູ້ຈັກຄວາມ ມີນ້ຳໃຈກັບເດັກນ້ອຍແມ່ຍິງກໍເປັນນີ້ ". ພໍ່ລຸງແມວນ້ຳ ຫົວຈົນພຸງໃຫຍ່ເຟືອນຂຶ້ນລົງ ເວລາຫົວແຮງໆແບບນີ້ ໜວດຍາວຂອງເພິ່ນເຫນັງຍຸບໆ.

- " ແລ້ວ ອີ່ນາງ ຊິໄປຫາໃຜລະ ? "

- " ແມ່ຕູ້ ມັດສຸຍາມາ ທາເກະ "

- " ເອີ ແມ່ຕູ້ ທາເກະ ຊັ້ນຫວາ?, ຊັ້ນກໍເປັນ... "

- " ຫລານສາວ ແມ່ຕູ້ ແທ້ໆເລີຍລະ "

- " ຊັ້ນກະເປັນລູກຂອງ ສຶຊິຈັງ ລະຕິ "

- " ເຈົ້າ ແມ່ນແລ້ວ, ຫລານຊື່ ຊາຈິໂກະ "

- " ໂອ່ ເປັນລູກ ຂອງ ສຶຊິຈັງ ແທ້ໆຫວະນີ້ ..." ພໍ່ລຸງແມວນ້ຳ ຈຶ່ງເບິ່ງ ຊາຈິໂກະ ແຕ່ຫົວຮອດປາຍຕີນ.

- " ຄືແມ່ຂະໜາດເລີຍ ທັງໜ້າຕາ ທ່າທາງ ", ລຸງເວົ້າແລ້ວກໍຫົວຂຶ້ນເອີ້ກໆ

ຊາຈິໂກະ ກັບເທັດສຶຈິ ພາກັນນັ່ງລົງຕັ່ງແຖວໜ້າພໍ່ລຸງ.
ບໍ່ດົນ ລົດເມປະຈຳທາງ ກໍເຄື່ອນທີ່ອອກຈາກບ່ອນຈອດ.

- " ເທັດສຶຈິ ດຽວນີ້ ພໍ່ໂຕເປັນແນວໃດແດ່ລະ ? ຍັງກິນເຫລົ້າຢູ່ບໍ? "



ພໍ່ລຸງແມວນໍ້າ ໂງກໜ້າເຂົ້າມາຖາມເທັດສືຈິ ທີ່ນັ່ງຢູ່ແຖວໜ້າ.

ທ້າວນ້ອຍເຮັດໜ້າຂື່ມ ແລ້ວງຶກຫົວແທນຄຳຕອບ.

- " ທ່າມັນເອີຍ ! ", ພໍ່ລຸງແມວນໍ້າຈົ່ມ ສະແດງຄວາມເບື່ອໜ່າຍ.

ແຕ່ກ່ອນ ພໍ່ຂອງເທັດສືຈິ ເປັນຄົນຫາປາຜູ້ຫ້າວຫັນດຸໝັ່ນ ແຕ່ເມື່ອແມ່ຂອງເທັດສືຈິ ຕາຍຈາກ ເລົາກໍໝົດກຳລັງໃຈຫາຢູ່ຫາກິນ ທຳອິດ ຊາວບ້ານກໍເຫັນໃຈ ເພາະຮູ້ວ່າສອງຜົວເມຍນີ້ຮັກກັນຫລາຍ ແຕ່ດົນມາໃຜໆກໍເລີຍເບື່ອ.

ພໍ່ຂອງເທັດສືຈິ ກິນເຫລົ້າເພື່ອໃຫ້ລືມຄວາມຄິດຮອດແມ່ ແຕ່ເຫລົ້າຄົງປ່ຽນນິໄສຂອງພໍ່ເສຽແລ້ວ ເພາະເມື່ອມີເງິນ ພໍ່ກໍບໍ່ອອກຫາປາ ແຕ່ໄປຫລິ້ນແຂ່ງລົດ ແຂ່ງມ້າ ການພະນັນທຸກຊະນິດ. ພໍ່ສອນໃຫ້ເທັດສືຈິຫຸງເຂົ້າ ແລະ ຊັກເສື້ອຜ້າເອງຕັ້ງແຕ່ ເຂົາຍັງເປັນເດັກນ້ອຍໆພຸ້ນ.

ເຖິງວ່າພໍ່ຂອງເທັດສືຈິ ຈະເປັນແບບນີ້ ແຕ່ທ້າວນ້ອຍກໍບໍ່ຢາກໄດ້ຍິນໃຜມາເວົ້າວ່າໃຫ້ພໍ່. ໂດຍສະເພາະແລ້ວ ຕໍ່ໜ້າສາວນ້ອຍຜູ້ໜ້າຮັກຄື ຊາຈິໂກະ.

ແມ່ຕູ້ທາເກະ ມີໃຈເມດຕາປານີຕໍ່ ເທັດສືຈິຫລາຍ ບາງເທື່ອເພິ່ນຕົ້ມ

ມັນໃສຊື່ອີ້ວມາໃຫ້ ທັງບອກສອນແນະນຳນັ້ນນີ້ຢູ່ເລື້ອຍໆ ດັ່ງນັ້ນ ເທັດສຶຈິ ຈຶ່ງຮູ້ສຶກວ່າ ຫລານສາວແມ່ຕູ້ທາເກະ ບໍ່ແມ່ນຜູ້ອື່ນຜູ້ໄກ.

ເທັດສຶຈິ ຄຶດຍ້ອງ ຊາຈິໂກະ ຢູ່ວ່ານາງບໍ່ຢ້ານເກງໃຜ ທັງບໍ່ຂີ້ອາຍອີກ ເຊິ່ງຕ່າງກັບໂຕເຂົາຫລາຍ ທ້າວນ້ອຍຈຶ່ງຮູ້ສຶກແປກໃຈ ທັງຄຶດຢາກເຮັດໄດ້ຄືນາງ.

ລົດເມພວມແລ່ນຂຶ້ນຄ້ອຍຈຶ່ງເລັ່ງຈັກສຽງດັງ ພໍ່ລຸງແມວນ້ຳແຜດສຽງເວົ້າເສັງກັບສຽງຈັກລົດວ່າ :

- " ຊາຈິໂກະຈັງ ແມ່ຂອງຫລານ ມີຮອຍແປ້ວ ຢູ່ທ້ອງຍ້ອນປາດໄສ້ຕິ່ງແມ່ນບໍ່ລະ ? "

ຊາຈິໂກະ ຕົກໃຈທີ່ໄດ້ຍິນຄຳຖາມ ເພາະບໍ່ຄຶດວ່າຈະມີໃຜຖາມແບບນີ້.

ຜູ້ໂດຍສານອື່ນ ງວາກມາເບິ່ງນາງເປັນຕາດຽວກັນ ຊາຈິໂກະ ໜ້າແດງ ແລ້ວຕອບຄ່ອຍໆວ່າ :

- " ມີແທ້ "

- " ລຸງນີ້ລະ ເປັນຜູ້ປາດໃຫ້ນະ ! " ເພິ່ນເວົ້າແລ້ວ ກໍຫົວເອີ້ກໆຂຶ້ນໜັກແຮງ ຈົນພຸງເຟືອນນ່ອມໆທັງໝວດກໍເໜັງຍຸກຍິກໄປມາ ສຽງຫົວນັ້ນເຮັດໃຫ້ລົດສັ່ນໄປນຳ.

- " ຊັ້ນ ພໍ່ລຸງ ເປັນທ່ານໝໍ ບໍ ? "

- " ເອີ ກະຊິຊັ້ນຕວ່າເບາະ ແຕ່ຢູ່ບ້ານນີ້ ເຂົາເອີ້ນວ່າ "ໝໍນອກກົດ" ພໍ່ຂອງເທັດສຶຈິຕູ່ວ່າລຸງ ຊິຂ້າແມ່ຂອງຫລານຫັ້ນຕິ ເພາະໝໍນອກກົດບໍ່ເກັ່ງແທ້ ແຕ່ໝາກເຮັງນີ້ ຕໍ່ໃຫ້ເກັ່ງທໍ່ໃດ ກະປິ່ນປົວບໍ່ເຊົາດອກ ລຸງເອງກະເສຍໃຈ ". ປະໂຫຍກສຸດທ້າຍ ເວົ້າຄ່ອຍໆຄືຈົ່ມວ່າກັບຕົນເອງ.

ຈາກນັ້ນ ພໍ່ລຸງແມວນ້ຳ ກໍມິດງຽບໄປ ໃບໜ້າເຄັ່ງຂຶມ ເບິ່ງພໍປານວ່າບໍ່ແມ່ນຄົນຜູ້ດຽວ ກັບຜູ້ຫົວເອີ້ກໆຢູ່ຫວ່າງກີ້.

ເທັດສຶຈິ ກັດພິສົບໄວ້ ເບີດໜ້າອອກນອກປ່ອງຢ້ຽມ ເຂົາຮູ້ສຶກເສົ້າ ແລະ

24/VII
ຫ້າມຈຳໜ່າຍ

ເຈັບປວດຫົວໃຈເມື່ອໄດ້ຍິນຄົນເວົ້າຮອດແມ່ຂຶ້ນມາແບບນີ້.

ແມ່ຂອງເຫັດສີຈິ ເສຽຊີວິດ ຕັ້ງແຕ່ເຂົາຮຽນຢູ່ຫ້ອງ ປ.1, ແຕ່ທ້າວນ້ອຍຍັງຈື່ຈຳໃບໜ້າອັນຈ່ອຍມ້ານຂອງແມ່ໄດ້ຕິດຕາ ເຖິງແມ່ນວ່າດຽວນີ້ ເຂົາຮຽນຢູ່ຫ້ອງປະຖົມ 5 ແລ້ວກໍຕາມ.

- " ຟັງຄວາມພໍ່ເດີ ລູກ ", ນັ້ນເປັນຄວາມສຸດທ້າຍ ທີ່ແມ່ເວົ້າກັບເຂົາ.

ເຫັດສີຈິ ຍັງບໍ່ລືມສຳຜັດເຢັນຈ້ອຍໆ ຈາກມືມີແຕ່ກະດູກຫຸ້ມຂອງແມ່ຈົນເທົ້າທຸກມື້ນີ້.

ຊາຈິໂກະ ເຫັນເຫັດສີຈິ ມີນ້ຳຕາຍິ້ມປີ້ ຈຶ່ງປ່ຽນເລື່ອງເວົ້າ:

- " ຕອນປາດ ແມ່ຂອງຫລານ ໄຫ້ບໍ່ ? "

- " ບໍ່ໃຫ້ເວົ້າແລ້ວ ຮ້ອງຈົນໂຮງໝໍຊິແຕກພຸ້ນລະ "

- " ຄັກຫລາຍ ຫລານຊິເອົາເລື່ອງນີ້ ໄປເວົ້າຢອກແມ່ກ່ອນ "

ຄຳເວົ້າຂອງນາງ ເຮັດໃຫ້ພໍ່ລຸງແມວນ້ຳຫົວກ້າກໆຂຶ້ນອີກ ເຫັດສີຈິ ກໍເລີຍຫົວອີ້ກໆໄປນຳ.

ລົດເມແລ່ນໄປຕາມເສັ້ນທາງເທິງພູ ບາງເທື່ອງ່າໄມ້ຍ່ອນລົງຕ່ຳຮະກັບປ່ອງຢ້ຽມລົດ ເພາະຫົນທາງແຄບຫລາຍ ແລະຕອນລ້ຽວໂຄ້ງ ທ້າຍລົດຍັງຫວິດອອກນອກທາງ ເຊິ່ງເປັນຮ່ອງເຫວ ເຮັດໃຫ້ ຊາຈິໂກະ ຮ້ອງວາຍໆດ້ວຍຄວາມຕົກໃຈຢ້ານ.

- " ບໍ່ເປັນຫຍັງດອກ ຄົນຂັບເຂົາລຶ້ງທາງດີ ". ພໍ່ລຸງໝໍເວົ້າອອຍໃຈ ແຕ່ຊາຈິໂກະ ກໍຍັງຢ້ານຢູ່.

ເມື່ອລົດແລ່ນຜ່ານຮ່ອມພູອອກມາແລ້ວ ຈຶ່ງເຫັນທ້ອງຟ້າສີຄາມ ແລະແຜ່ນທະເລກວ້າງຂວາງໜ້າຢູ່.

- " ໂຫ້ ຈັ່ງແມ່ນງາມ ! " ຊາຈິໂກະ ເຮັດຕາຕີ່ ນາງບໍ່ເຄີຍເຫັນທະເລງາມ ແບບນີ້ມາກ່ອນ.

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ